ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ ເລກທີ 244 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12.12.2011

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ ມາດຕາ 54 (ປັບປຸງ) ຂອງ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ.

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 16/ສພຊ, ລົງວັນທີ 7 ທັນວາ 2011 ກ່ຽວກັບການຮັບຮອງເອົາມາດຕາ 54 (ປັງປຸງ) ຂອງ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ, ລົງວັນທີ 08 ທັນວາ 2011.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

<u>ມາດຕາ 1</u> : ປະກາດໃຊ້ມາດຕາ 54 (ປັບປຸງ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປ່ຽນແທນ ມາດຕາ 54 (ເກົ່າ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02 ສພຊ, ລົງວັນທີ 26 ທັນວາ 2006.

<u>ມາດຕາ 2</u> : ລັດຖະດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ                                        ເລກທີ 16 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ມາດຕາ 54 (ປັບປຸງ) ຂອງກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ມາດຕາ 54 (ປັບປຸງ) ຂອງກົດໝາຍວ່າດ້ວຍ ງົບປະ ມານແຫ່ງລັດ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 7 ທັນວາ 2011

### ກອງປະຊຸມໄດ້ຕົກລົງ:

**ມາດຕາ 1.** ຮັບຮອງເອົາ ມາດຕາ 54 (ປັບປຸງ) ຂອງກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫລາຍ

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 7 ທັນວາ 2011

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----------------

**ສະພາແຫ່ງຊາດ** **ເລກທີ 01 /ສພຊ**

ນະຄອນຫລວງວຽງຈັນ, ວັນທີ 7 ທັນວາ 2011

# ກົດໝາຍ

## ວ່າດ້ວຍ ງົບປະມານແຫ່ງລັດ

## ( ມາດຕາ 54 ປັບປຸງ)

**ມາດຕາ 54 (ປັບປຸງ) ການດັດແກ້ແຜນງົບປະມານແຫ່ງລັດ**

ການດັດແກ້ແຜນງົບປະມານແຫ່ງລັດປະຈຳສົກປີ ສາມາດປະຕິບັດໄດ້ໜຶ່ງເທື່ອຕໍ່ສົກປີງົບປະມານ ໃນກໍລະນີທີ່ ມີ ລາຍຮັບເກີນ ຫລື ຫລຸດ ແຜນງົບປະມານ; ການປ່ຽນແປງນະໂຍບາຍ ຫລື ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບຕໍ່ລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດປະຈຳສົກປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້.

ການດັດແກ້ແຜນງົບປະມານແຫ່ງລັດປະຈຳສົກປີ ໃຫ້ປະຕິບັດຄ້າຍຄືກັນກັບຂັ້ນຕອນການພິຈາລະນາຮັບຮອງເອົາແຜນງົບປະມານປະຈຳສົກປີ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້